ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ໜ່ວຍພັກກົມນະໂຍບາຍເງິນຕາ ສ້າງຂະບວນການຕ້ອນຮັບ ກອງປະຊຸມກາງສະໄໝຂອງຕົນ



ໃນຕອນເຊົ້າຂອງວັນທີ 19 ມິຖຸນາ 2023 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ). ໜ່ວຍພັກກົມນະໂຍບາຍເງິນຕາ ທີ່ຂຶ້ນກັບອົງຄະນະພັກ ທຫລ ໄດ້ຈັດຕັ້ງຂະບວນການສຳມະນາວິຊາການ ເພື່ອເປັນການຂໍ່ານັບຮັບຕ້ອນກອງປະຊຸມກາງສະໄໝຂອງຕົນຂຶ້ນ ໂດຍການເປັນປະທານຂອງທ່ານ ສຸລິສັກ ທຳນຸວົງ, ເລຂາໜ່ວຍພັກ, ຫົວໜ້າກົມນະໂຍບາຍເງິນຕາ ພ້ອມດ້ວຍການເຂົ້າຮ່ວມຂອງຄະນະພະແນກ, ພະນັກງານວິຊາການຂອງບັນດາກົມພາຍໃນ ທຫລ ແລະ ຈາກສາຂາ ທຫລ ປະຈຳພາກ ເຂົ້າຮ່ວມທັງຮູບແບບຊ້ອງໜ້າ ແລະ ທາງໄກ (ອອນລາຍ) ຫຼາຍກວ່າ 100 ທ່ານ.

ພາຍໃນກອງປະຊຸມສຳມະນາໄດ້ນຳສະເໜີ 4 ຫົວຂໍ້ຫຼັກ ເຊິ່ງເປັນຫົວຂໍ້ທີ່ຕິດພັນກັບເສດຖະກິດມະຫາພາກ ຄື: ລວມຍອດຜະລິດຕະພັນພາຍໃນປະເທດ (GDP) ແລະ ອັດຕາເງິນເຟີ້; ການສັງລວມສະຖິຕິເສດຖະກິດພາກຕ່າງປະເທດ; ການດຳເນີນນະໂຍບາຍເງິນຕາ ແລະ ວິທີການໃນການກຳນົດອັດຕາແລກປ່ຽນອ້າງອີງຂອງ ທຫລ; ການຮ່າງບົດລາຍງານເສດຖະກິດປະຈຳປີຂອງ ທຫລ, ບົດລາຍງານສະຖິຕິເງິນຕາ ປະຈຳໄຕມາດ ແລະ ບົດເສດຖະກິດພົ້ນເດັ່ນປະຈຳເດືອນ ຊຶ່ງເປັນວຽກງານວິຊາການທີ່ຕິດພັນຂອງກົມນະໂຍບາຍເງິນຕາ. ຜູ້ເຂົ້າຮ່ວມສຳມະນາໄດ້ມີການແລກປ່ຽນຄຳຄິດເຫັນ ແລະ ຕັ້ງຄຳຖາມຕໍ່ບາງບັນຫາທີ່ຕິດພັນກັບ 4 ຫົວຂໍ້ດັ່ງກ່າວ.










ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນດ້ວຍບັນຍາກາດຟົດຟື້ນ, ຜູ້ເຂົ້າຮ່ວມໄດ້ຮັບຄວາມຮູ້ ແລະ ຂໍ້ມູນດ້ານວິຊາການ ທີ່ຕິດພັນກັບວຽກງານນະໂຍບາຍເງິນຕາ. ພ້ອມດຽວກັນນີ້, ທ່ານຫົວໜ້າກົມນະໂຍບາຍເງິນຕາຍັງໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມ ຈົ່ງໄດ້ນຳເອົາຄວາມຮູ້ດ້ານວິຊາການດັ່ງກ່າວ ໄປໝູນໃຊ້ໃນໜ້າທີ່ວຽກງານຂອງຕົນ ໂດຍສະເພາະບັນດາສາຂາ ທຫລ ທີ່ປະຕິບັດໜ້າທີ່ວຽກງານຕິດພັນກັບທ້ອງຖິ່ນ ໃຫ້ເກີດຜົນຜະໂຫຍດສູງສຸດ ແລະ ໄດ້ຮັບຜົນສຳເລັດຢ່າງຈົບງາມ.

**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ